**ມິຊຊາອາທິດທີ 12 ກຳນົດທຳມະດາ ປີ B**

**ວັນອາທິດທີ 20 ມິຖຸນາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 4, 35-41**

ພໍຕົກຄ່ຳວັນດຽວກັນນັ້ນ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ: "ພວກເຮົາຈົ່ງຂ້າມໄປຟາກພຸ້ນ". ເມື່ອໄດ້ບອກໃຫ້ຝູງຊົນກັບໄປແລ້ວ, ພວກສາວົກກໍໄດ້ພາພຣະເຢຊູເຈົ້າທີ່ຊົງປະທັບຢູ່ໃນເຮືອແລ້ວໄປ, ແລະມີເຮືອລຳອື່ນຕິດຕາມໄປດ້ວຍ. ພໍດີເກີດລົມພາຍຸໃຫຍ່ຟອງຊັດຟາດມາໃສ່ຈົນນ້ຳເຂົ້າເຕັມເຮືອ. ສ່ວນພຣະອົງນອນຫລັບຢູ່ບົນເສື່ອຢູ່ທ້າຍເຮືອ. ພວກສາວົກຈຶ່ງປຸກພຣະອົງແລະທູນວ່າ: "ພຣະອາຈານເອີຍ! ພຣະອົງບໍ່ຫົວຊານຳເລື່ອງພວກຂ້ານ້ອຍຈະຕາຍຢູ່ບໍ?" ພຣະອົງຊົງລຸກຂຶ້ນສັ່ງບັງຄັບລົມພາຍຸແລະກ່າວກັບທະເລວ່າ: "ຈົ່ງມິດງຽບ! ລົມພາຍຸກໍເຊົາ, ທະເລກໍສະຫງົບງຽບຢ່າງໃຫຍ່." ແລ້ວພຣະອົງກ່າວກັບພວກເຂົາວ່າ: "ເປັນຫຍັງພວກເຈົ້າຈຶ່ງຢ້ານ? ພວກເຈົ້າບໍ່ມີຄວາມເຊື່ອບໍ?" ພວກສາວົກມີຄວາມຕົກໃຈຢ່າງໃຫຍ່ເວົ້າກັນວ່າ: "ເພິ່ນນີ້ແມ່ນໃຜຈຶ່ງບັງຄັບລົມແລະທະເລໄດ້?"

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດນີ້ຊ່ວຍພວກເຮົາໃຫ້ຖາມຕົວເອງວ່າ ສຳລັບຂ້ອຍພຣະເຢຊູເຈົ້າແມ່ນໃຜ? ໃນບົດອ່ານທີໜຶ່ງຈາກໜັງສືຂອງທ່ານຢ໋ອບ. ເມື່ອຢ໋ອບຖືກພຣະເຈົ້າທົດສອບ, ທ່ານຕົກຢູ່ໃນຄວາມສູນເສຍທັງຄົນໃກ້ຊິດອັລະຄອບຄົວ, ທັງຊັບສິນເງິນຄຳແລະສຸຂະພາບ. ເວລານັ້ນ, ຄວາມຄິດກ່ຽວກັບພຣະເຈົ້າໃນຊີວິດຂອງທ່ານກໍປ່ຽນແປງໄປ. ແຕ່ກ່ອນພຣະເຈົ້າເປັນຜູ້ໃກ້ຊິດ, ປົກປັກຮັກສາແລະອວຍພອນໃຫ້ຢ໋ອບ. ສ່ວນດຽວນີ້, ພຣະອົງກາຍເປັນຜູ້ທີ່ຫ່າງໄກ, ເປັນສັດຕູແລະເປັນຜູ້ລົງໂທດຢ໋ອບ. ແຕ່ທ້າຍສຸດ, ຢ໋ອບກໍເຂົ້າໃຈວ່າສິ່ງທີ່ທ່ານຄິດກ່ຽວກັບພຣະເຈົ້ານັ້ນເປັນສິ່ງທີ່ຜິດ. ເພາະພຣະເຈົ້າບໍ່ແມ່ນຜູ້ທີ່ຕັດສິນລົງໂທດ, ແຕ່ພຣະອົງເປັນພຣະຜູ້ສ້າງ. ພຣະອົງບໍ່ໄດ້ເປັນສັດຕູກັບມະນຸດ, ແຕ່ພຣະອົງເປັນຜູ້ປົກປັກຮັກສາທັງຄົນດີແລະຄົນບໍ່ດີ. ແຕ່ຍ້ອນການກະທຳຂອງພຣະອົງເປັນສິ່ງທີ່ຢູ່ເໜືອສະຕິປັນຍາຂອງມະນຸດ. ດ້ວຍເຫດນີ້, ຢ໋ອບຈຶ່ງບໍ່ສາມາດເຂົ້າໃຈໄດ້.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລກໍກ່າວກັບກຸ່ມຊຸມຊົນຄວາມເຊື່ອຂອງທ່ານຢູ່ໂກຣິນໂທວ່າການຕາຍຂອງພຣະເຢຊູເຈົ້າບົນໄມ້ກາງເຂນໃນຄວາມຄິດແບບພາສາມະນຸດເປັນສິ່ງທີ່ອັບອາຍ, ເປັນການຖືກສາບແຊ່ງລົງໂທດ. ແຕ່ໃນຄວາມຄິດຂອງພຣະເຈົ້ານັ້ນການຕາຍຂອງພຣະເຢຊູເຈົ້າເປັນເຄື່ອງໝາຍສະແດງອອກເຖິງຄວາມຮັກທີ່ພຣະອົງມີຕໍ່ພວກເຮົາ. ດ້ວຍເຫດນີ້, ພຣະອົງຈຶ່ງຍອມຕາຍຜູ້ດຽວເພື່ອໃຫ້ທຸກຄົນໄດ້ຮອດຊີວິດ.

ໃນພຣະວໍລະສານວັນນີ້, ພວກລູກສິດກໍຍັງບໍ່ເຂົ້າໃຈເຖິງຕົວຕົນທີ່ແທ້ຈິງຂອງພຣະເຢຊູເຈົ້າ. ເຖິງແມ່ນວ່າພວກເຂົາຈະຢູ່ນຳພຣະອົງແລະພຣະອົງເອງກໍຢູ່ນຳພວກເຂົາຢູ່ໃນເຮືອ. ແຕ່ເມື່ອພວກເຂົາຕ້ອງປະເຊີນໜ້າກັບລົມພາຍຸແລະຄື້ນຟອງທະເລແລ້ວ. ພວກເຂົາກໍມີຄວາມຢ້ານກົວ. ຄວາມຢ້ານກົວຂອງພວກລູກສິດນີ້ສະແດງອອກເຖິງການຂາດຄວາມເຊື່ອຂອງພວກເຂົາ. ດັ່ງທີ່ພຣະເຢຊູເຈົ້າຖາມພວກລູກສິດວັນນີ້ວ່າ: “ເປັນຫຍັງພວກເຈົ້າຈຶ່ງຢ້ານ? ພວກເຈົ້າບໍ່ມີຄວາມເຊື່ອບໍ?”. ຄວາມຢ້ານກົວຂອງພວກລູກສິດຍັງເປັນເຄື່ອງໝາຍບອກໃຫ້ຮູ້ວ່າພວກເຂົາຍັງບໍ່ທັນເຂົ້າໃຈຮູ້ຈັກພຣະເຢຊູເຈົ້າຢ່າງແທ້ຈິງອີກດ້ວຍ.

ວັນນີ້, ກໍເປັນໂອກາດໃຫ້ພວກເຮົາຖາມຕົວເອງວ່າ ສຳລັບຂ້ອຍພຣະເຢຊູເຈົ້າແມ່ນໃຜ? ຂ້ອຍໄດ້ຮູ້ຈັກພຣະອົງຜ່ານທາງການອ່ານແລະຟັງວາຈາຂອງພຣະອົງບໍ? ຂ້ອຍໄດ້ເຊື່ອແລະໄວ້ໃຈໃນພຣະອົງບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກພຣະອົງນັບມື້ນັບຫລາຍຂຶ້ນຜ່ານທາງການອ່ານແລະຟັງວາຈາຂອງພຣະອົງ. ໂຜດໃຫ້ລູກເຊື່ອໝັ້ນແລະໄວ້ໃຈໃນພຣະອົງຍິ່ງຂຶ້ນ. ໂດຍສະເພາະ, ເມື່ອລູກຢູ່ໃນການທົດສອບແລະອຸປະສັກຂອງຊີວິດ. ໂຜດໃຫ້ລູກເຂົ້າໃຈວ່າພຣະອົງບໍ່ໄດ້ປະຖິ້ມລູກ. ຍ້ອນພຣະອົງຊົງຮັກແພງລູກ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ